ເປັນຫຍັງ ມະຫາວິທະຍາໄລ ຈຶ່ງທຳການສຳຫຼວດຄັ້ງນີ້?

- CU ຈະເກັບທ້ອນຂໍ້ມູນກ່ຽວກັບວັດທະນະທຳຂອງວິທະຍາເຂດແລະກ່ຽວກັບວ່າ ພະນັກງານແລະນັກສຶກສາ ຮູ້ສຶກໄດ້ຮັບຄວາມເຄົາລົບ, ການສະໜັບສະໜູນແລະຮູ້ສຶກມີຄຸນຄ່າ ຈາກມະຫາວິທະຍາໄລແລະພະແນກຂອງເຂົາເຈົ້າຫຼືບໍ່.
- ຜົນຂອງການສຳຫຼວດຈະຊ່ວຍຊີ້ໃຫ້ເຫັນບັນຫາທີ່ຕ້ອງການການແກ້ໄຂ ເພື່ອວ່າ CU ຈະກາຍເປັນວິທະຍາເຂດທີ່ມີຄວາມຍຸດຕິທຳ, ຫຼາກຫຼາຍແລະຄອບຄຸມສຳລັບທຸກໆຄົນ.

ເວລາໃດການສຳຫຼວດຈະເລີ່ມຂຶ້ນ?

- ໃນເດືອນ ຕຸລາ ປີນີ້, ນັກສຶກສາ, ພະນັກງານແລະຄູອາຈານ ຈະໄດ້ຮັບການເຊື້ອເຊີນໃຫ້ເຮັດການສຳຫຼວດ. ໃນອານາຄົດ, ການສຳຫຼວດຈະມີຂຶ້ນທຸກໆ ສີ່ປີ, ເພື່ອວ່າພວກເຮົາຈະສາມາດວັດແທກໄດ້ວ່າພວກຍັງເຮົາສືບຕໍ່ເຮັດໃຫ້ CU ເປັນສະຖານທີ່ເຮັດວຽກແລະການສຶກສາທີ່ດີກວ່າເກົ່າ.

ການສຳຫຼວດນີ້ບໍ່ອອກຊື່ແມ່ນບໍ່? ຄຳຕອບຂອງຂ້າພະເຈົ້າຖືເປັນຄວາມລັບແມ່ນບໍ່?

- ຄຳຕອບໃນແບບສຳຫຼວດຂອງທ່ານຈະບໍ່ອອກຊື່ແລະພວກເຮົານັບປະກັນຈະຮັກສາຄວາມເປັນສ່ວນຕົວຂອງທ່ານ. ພວກເຮົານຳໃຊ້ການປ້ອງການຫຼາຍຢ່າງເພື່ອບໍ່ໃຫ້ໃຜສາມາດຕິດຕໍ່ທ່ານກັບຄຳຕອບໃນແບບສຳຫຼວດຂອງທ່ານ.
- ທ່ານຈະໄດ້ຮັບການເຊື້ອເຊີນໃຫ້ທຳການສຳຫຼວດໃນທີ່ຢູ່ອີເມລ CU ຂອງທ່ານ. ເມື່ອທ່ານສຳເລັດການສຳຫຼວດແລະກົດປຸ່ມ "ສົ່ງ", ຊື່ແລະທີ່ຢູ່ອີເມລຂອງທ່ານຈະຖືກລຶບອອກໂດຍອັດຕະໂນມັດ. **ໃນຈຸດນີ້ ຄຳຕອບແບບສຳຫຼວດຂອງທ່ານກາຍເປັນແບບບໍ່ອອກຊື່ແລະບໍ່ສາມາດເຊື່ອມຕໍ່ຫາທ່ານໄດ້.**
- **ຈະບໍ່ມີຫົວໜ້າງານ, ຜູ້ບໍລິຫານຫຼືພະນັກງານຂອງ CU, ຍົກເວັ້ນ ເຈົ້າໜ້າທີ່ຜູ້ທຳການສຳຫຼວດຈາກສະຖາບັນຄົ້ນຄວ້າ CU Boulder ທີ່ຈະເຂົ້າເຖິງຂໍ້ມູນ.**
- ນອກຈາກນັ້ນ, ຂໍ້ມູນທີ່ບໍ່ອອກຊື່ທັງໝົດຈະຖືກເຂົ້າລະຫັດແລະ ເກັບຮັກສາໄວ້ໃນ ເຊີຟເວີ ທີ່ປອດໄພ ເຊິ່ງມີແຕ່ **ພະນັກງານຂອງສະຖາບັນຄົ້ນຄວ້າ ເທົ່ານັ້ນ** ສາມາດເຂົ້າໄດ້.
- **ການບໍ່ອອກຊື່ຂອງທ່ານ ແມ່ນຄວາມຮັບຜິດຊອບສູງສຸດຂອງພວກເຮົາແລະມັນຈະຖືກປົກປ້ອງຈາກການລາຍງານຜົນການສຳຫຼວດຄັ້ງນີ້ທັງໝົດ.** ພວກເຮົາຕ້ອງການໃຫ້ທ່ານໃຫ້ຄຳຄິດເຫັນຢ່າງກົງໄປກົງມາ ດ້ວຍຄວາມໝັ້ນໃຈວ່າທ່ານຈະຖືກປົກປ້ອງ 100%.

ຂ້າພະເຈົ້າໄດ້ຍິນເວື້ອຍເວື້ອງຂໍ້ມູນຖືກ ແຮັກ. ຄຳຕອບໃນແບບສຳຫຼວດຂອງຂ້າພະເຈົ້າຈະປອດໄພຊ່ຳໃດ?

- ຫ້ອງວິເຄາະຂໍ້ມູນຂອງ (ODA) ປະຈຸບັນນີ້ ຮັກສາຂໍ້ມູນທີ່ລະອຽດອ່ອນດ້ານການຈ້າງງານແລະນັກສຶກສາ ທຸກຢ່າງທີ່ຫ້ອງວິເຄາະເຂົ້າເຖິງໄດ້ ດ້ວຍການນຳໃຊ້ ການຮັກສາຄວາມປອດໄພຂອງຂໍ້ມູນທີ່ທັນສະໄໝ. ຂໍ້ມູນຂອງທ່ານຈະຖືກເຂົ້າລະຫັດຕະຫຼອດຂະບວນການສຳຫຼວດ. ເມື່ອທ່ານສົ່ງແບບສຳຫຼວດ, ມັນຈະເປັນການສຳຫຼວດແບບບໍ່ອອກຊື່ແລະຈະຖືກເກັບຮັກສາໄວ້ໃນຮູບແບບລະຫັດ ໃນເຊີຟເວີທີ່ປອດໄພຂອງ ODA.

ໃຜເປັນຜູ້ທໍາການສໍາຫຼວດ?

- ເຈົ້າໜ້າທີ່ ການສໍາຫຼວດຂອງ ສະຖາບັນຄົ້ນຄວ້າ ຈະຄວບຄຸມດູແລການສໍາຫຼວດ. ກຸ່ມນີ້ດໍາເນີນທໍາການສໍາຫຼວດຫຼາຍປະເພດແລະພວກເຮົາເປັນຜູ້ຊ່ຽວຊານໃນເລື້ອງນີ້ແລະໃນມາດຕະຖານຄວາມປອດໄພຂອງຂໍ້ມູນ.

ການສໍາຫຼວດໄດ້ຮັບການພັດທະນາແນວໃດ?

- ການສໍາຫຼວດດ້ານວັດທະນະທໍາຂອງ ວິທະຍາເຂດ ໄດ້ຮັບການພັດທະນາພາຍໃນ CU Boulder. ເຈົ້າໜ້າທີ່ໃນ ສໍານັກງານສົ່ງເສີມຄວາມສະເໝີພາບແລະການປະຕິບັດລະ ບຽບ (OIEC) ໜ່ວຍງານປະເມີນຜົນແລະ ສໍານັກວິເຄາະຂໍ້ມູນ (ODA) ກຸ່ມສໍາຫຼວດ, ພ້ອມດ້ວຍພັນທະມິດພາຍໃນວິທະຍາເຂດຈໍານວນຫຼາຍໄດ້ເຮັດວຽກຮ່ວມກັນເພື່ອການສໍາຫຼວດຄັ້ງນີ້.

ຜົນຂອງການສໍາຫຼວດຈະຖືກນໍາໃຊ້ແນວໃດ?

- ພວກເຮົາຈະນໍາໃຊ້ຜົນການສໍາຫຼວດເພື່ອຊີ້ບອກບັນຫາພາຍໃນສະຖານທີ່ເຮັດວຽກແລະເພື່ອພັດທະນາແຜນການທໍາການປັບປຸງ.
- ໃນອະນາຄົດ, ການສໍາຫຼວດຈະມີຂຶ້ນທຸກໆສີ່ປີ ເພື່ອພວກເຮົາຈະສາມາດກໍານົດໄດ້ວ່າພວກເຮົາມີຄວາມຄືບໜ້າໃນການສ້າງຊຸມຊົນວິທະຍາເຂັດແບບຄອບຄຸມຫຼືບໍ່.

ຂ້າພະເຈົ້າຈະທໍາການສໍາຫຼວດໄດ້ແນວໃດ?

- ລິ້ງຂອງການສໍາຫຼວດສະເພາະຈະຖືກສົ່ງຫາ ທີ່ຢູ່ອີເມວ CU Boulder ຂອງທ່ານ. ລິ້ງຈະພາທ່ານເຂົ້າຫາການສໍາຫຼວດອອນລາຍ. ທ່ານສາມາດເລືອກຕອບແບບສໍາຫຼວດເປັນພາສາອັງກິດ, ເອສປາໂຍນ, ເນປານ, ຈີນ, ລາວຫຼື ທິເບດ. ຖ້າທ່ານຈະຕອບແບບສໍາຫຼວດແບບໃຊ້ເຈ້ຍແລະສໍ, ພວກເຮົາສາມາດສະໜອງໃຫ້ໄດ້. ພະແນກຂອງທ່ານຈະຈັດໂມງເວລາເພື່ອການສໍາຫຼວດແລະນາຍພາສາຈະມີໃຫ້ພ້ອມຊ່ວຍເຫຼືອທ່ານໃນເວລານັ້ນ, ໃນກໍລະນີທີ່ທ່ານມີຄໍາຖາມ.

ທຸກຄົນຈະເຮັດການສໍາຫຼວດຄືກັນໝົດບໍ່?

- ການສໍາຫຼວດຈະມີເວີຊັນທີ່ແຕກຕ່າງກັນ. ຄະນະອາຈານ, ພະນັກງານ, ນັກສຶກສາປະລິນຍາໂທ, ປະລິນຍາຕີ, ແລະເຈົ້າໜ້າທີ່ສະຖາບັນ ຈະໄດ້ມີແບບການສໍາຫຼວດເປັນເວີຊັນຂອງໃຜລາວເພື່ອໃຫ້ແທດເໝາະກັບບົດບາດຂອງເຂົາເຈົ້າ. ເວີຊັນສໍາລັບພະນັກງານ ຈະມີໃຫ້ເປັນພາສາອັງກິດ, ເນປານ, ຈີນ, ລາວແລະທິເບດ.

ການຕອບແບບສໍາຫຼວດຈະໃຊ້ເວລາດົນປານໃດ?

- ການຕອບແບບສໍາຫຼວດຈະໃຊ້ເວລາປະມານ 20 – 30ນາທີ - ຂຶ້ນກັບທ່ານມີສິ່ງທີ່ຕ້ອງເວົ້າຫຼາຍໜ້ອຍປານໃດ. ຜູ້ທີ່ມີຫຼາຍອັນທີ່ຢາກເວົ້າອາດໃຊ້ເວລາດົນກວ່າ. ຖ້າທ່ານຕອບແບບສໍາຫຼວດອອນລາຍແລະຕ້ອງການຢຸດກ່ອນຈະສໍາເລັດການຕອບຄໍາຖາມ, ຊອຟແວຣ໌ຂອງການສໍາຫຼວດຈະເກັບຮັກສາບ່ອນຂອງທ່ານໄວ້ ແລະທ່ານສາມາດເລີ່ມການຕອບບ່ອນທີ່ທ່ານຢຸດໄວ້ໄດ້ ດ້ວຍການ ຄລິກໃສ່ ລິ້ງອັນດຽວທີ່ມາກັບອີເມລຂອງທ່ານທີ່ ເຊີນທ່ານຕອບແບບສໍາຫຼວດນັ້ນ.

ຂ້າພະເຈົ້າສາມາດຕອບແບບສໍາຫຼວດໃນ ສະມາດໂຟນຫຼືອຸປະກອນມືຖືໄດ້ບໍ່?

- ໄດ້ ແຕ່ມັນຈະຫຍຸ້ງຍາກໃນການທົບທວນແລະຕອບຄຳຖາມການສຳຫຼວດໃນສະມາດໂຟນ. ພວກເຮົາຂໍແນະນຳ, ຖ້າເປັນໄປໄດ້, ວ່າໃຫ້ທ່ານຕອບແບບສຳຫຼວດໃນຄອມພິວເຕີ.

ຄຳຖາມໃນແບບສຳຫຼວດແມ່ນຄຳຖາມປະເພດໃດ?

- ຄຳຖາມແມ່ນຖາມກ່ຽວກັບ ສະພາບຄວາມຮູ້ສຶກຂອງການເປັນສ່ວນໜຶ່ງໃນວິທະຍາເຂດ, ສະຖານທີ່ເຮັດວຽກຂອງທ່ານ - ວ່າທ່ານຮູ້ສຶກໄດ້ຮັບຄວາມເຄົາລົບແລະສະໜັບສະໜຸນ - ກໍ່ຄື ປະສົບການທີ່ທ່ານອາດມີໃນການໄດ້ຮັບການປະຕິບັດດ້ານລົບ, ການຄຸມຄາມກ່ຽວຂ່ອງກັບຕົວຕົນຂອງທ່ານແລະການຖືກແບ່ງແຍກກີດກັນ ຫຼືບໍ່. ຍັງມີຄຳຖາມດ້ານປະຊາກອນ (ຕົວຢ່າງ: ຄຳຖາມກ່ຽວກັບເຊື້ອຊາດ, ຊົນເຜົ່າ, ແລະເພດ) ເນື່ອງຈາກວ່າ ພວກເຮົາຮູ້ວ່າ ຄົນທີ່ມີທີ່ມາທີ່ແຕກຕ່າງ ອາດມີປະສົບການທີ່ແຕກຕ່າງໃນສະຖານທີ່ເຮັດວຽກ. **ຜົນໄດ້ຮັບສຳລັບກຸ່ມປະຊາກອນ ຈະບໍ່ຖືກເປີດເຜີຍ ຖ້າມີສະມາຊິກໜ້ອຍກວ່າ 10 ຄົນໃນກຸ່ມ. ພວກເຮົາຈະບໍ່ນຳສະເໜີຂໍ້ມູນທີ່ບົ່ງຜ່ອງ ອອກໄປເພື່ອກຳນົດຕົວຕົນຂອງບຸກຄົນ.**

ຜົນປະໂຫຍດຈາກການເຮັດການສຳຫຼວດຄັ້ງນີ້ມີແນວໃດແນ່?

- ເນື່ອງຈາກ ຄຳຕອບໃນແບບສຳຫວດຖືເປັນຄວາມລັບທີ່ເຄັ່ງຄັດ, ຜົນຂອງການສຳຫຼວດຈະບໍ່ເປັນຜົນປະໂຫຍດຕໍ່ບຸກຄົນໃດເປັນການສ່ວນຕົວ. ແຕ່ວ່າ ພວກເຮົາຫວັງວ່າ, ໂດຍລວມແລ້ວ, ນັກສຶກສາ, ພະນັກງານແລະຄະນະອາຈານຈະໄດ້ຮັບຜົນປະໂຫຍດຈາກຄຳແນະນຳທີ່ໄດ້ຮັບຈາກຜົນຂອງການນຳຫຼວດທີ່ວິ ທະຍາເຂດຮັບຮອງເອົາ.

ຈະເກີດຫຍັງຂຶ້ນເມື່ອການສຳຫຼວດສຳເລັດລົງ?

- ສະມາຊິກພະນັກງານໃນ ກຸ່ມຄົ້ນຄວ້າສຳຫຼວດປະຈຳສະຖາບັນ ຈະປິດການສຳຫຼວດແລະສົ່ງຊຸດຂໍ້ມູນທີ່ບໍ່ມີຕົວຕົນ (ບໍ່ອອກຊື່) ໃຫ້ກັບ ສຳນັກສົ່ງເສີມຄວາມສະເໝີພາບແລະການປະຕິບັດກົດລະບຽບ (OIEC). ສຳນັກກວດສອບ OIEC ຈະວິເຄາະຂໍ້ມູນແລະກະຈາຍລາຍງານຂອງຜົນໄດ້ຮັບ, ກໍ່ຄືຄຳແນະນຳເພື່ອການແກ້ໄຂບັນຫາແລະຂໍ້ກັງວົນ.

- ການປະເມີນ OIEC ຈະເຮັດວຽກຮ່ວມກັບສຳນັກເພື່ອພະທະນາແຜນປະຕິບັດການເພື່ອແກ້ໄຂບັນແລະສ້າງຄວາມເຊື່ອຖື.

ຈະເຮັດແນວໃດຖ້າຂ້າພະເຈົ້າມີຄຳຖາມເພີ່ມເຕີມກ່ຽວກັບການສຳຫຼວດ?

- ຖ້າທ່ານມີຄຳຖາມກ່ຽວກັບການສຳຫຼວດ, ກະລຸນາ ສົ່ງອີເມວຫາ CampusCultureSurvey@Colorado.edu ແລະ ສະມາຊິກທີມງານສຳຫຼວດຈະຕິດຕໍ່ກັບທ່ານ.

ຈະເຮັດແນວໃດຖ້າຂ້າພະເຈົ້າຢາກລາຍງານ ປະສົບການການຖືກຄຸກຄາມຫຼືການຖືກຈຳແນກກີດກັນທີ່ຂ້າພະເຈົ້າປະສົບມາ ຍ້ອນຕົວຕົນຂອງຂ້າພະເຈົ້າ?

- **ຄຳຕອບຂອງທ່ານໃນແບບສຳຫຼວດ ຈະບໍ່ຖືກນຳໃຊ້ເປັນການລາຍງານຢ່າງເປັນທາງການໃຫ້ກັບມະຫາວິທະຍາໄລ. ຂໍ້ມູນທີ່ທ່ານໃຫ້ໃນການສຳຫຼວດນັ້ນ ຈະບໍ່ຖືກລາຍງານໃຫ້ກັບ OIEC ຫຼືໃຊ້ເພື່ອເລີ່ມການຕິດຕາມ ໃນສະຖານະການທີ່ກ່ຽວຂ້ອງກັບ ການຈຳແນກກີດກັ້ນຫຼືການຄຸກຄາມ ກັບຊົນຊັ້ນທີ່ໄດ້ຮັບການຄຸ້ມຄອງ.**

- ເພື່ອລາຍງານເຫດການຢ່າງເປັນທາງການ ກ່ຽວກັບການຈຳແນກກີດກັນຫຼືການຄຸກຄາມຊົນຊັ້ນທີ່ຮັບການຄຸ້ມຄອງ, ກະລຸນາໂທຫາ ສຳນັກສົ່ງເສີມຄວາມສະເໝີພາບ ແລະ ການປະຕິບັດລະບຽບ (OIEC) ທີ່ 303-492-2127; ອີເມວ cureport@colorado.edu, ຫຼືໃຊ້ ແບບຟອມລາຍງານອອນລາຍ. ຖ້າທ່ານລາຍງານກ່ຽວກັບສິ່ງທີ່ເກີດຂຶ້ນກັບທ່ານໂດຍກົງ, ມີທາງເລືອກທີ່ສາມາດລາຍງານໂດຍບໍ່ອອກຊື່ ດ້ວຍການໃຊ້ ແບບຟອມການລາຍງານອອນລາຍ.
- ການລາຍງານແບບບໍ່ອອກຊື່ກ່ຽວກັບຄວາມກັງວົນເຖິງ ການສຶກສາ, ການຄົ້ນຄວ້າຫຼືຄວາມຊື່ສັດທາງທຸລະກິດຫຼືສະພາບແວດລ້ອມດ້ານສະຂະພາບແລະຄວາມປອດໄພພາຍໃນວິທະຍາເຂດ ສາມາດຍື່ນສົ່ງໄດ້ທີ່ ເວັບໄຊ້ດ້ານຈັນຍາບັນ EthicsPoint ຂອງ CU Boulder.

ຈະເຮັດແນວໃດຖ້າຂ້າພະເຈົ້າຢາກເວົ້າກັບບຸກຄົນໃດໜຶ່ງຢ່າງເປັນຄວາມລັບ ກ່ຽວກັບບັນຫາທີ່ມີຂຶ້ນໃນການສຳຫຼວດຄັ້ງນີ້?

- ທ່ານບໍ່ຈຳເປັນຕ້ອງລາຍ ງານຢ່າງເປັນທາງການເຖິງ ມະຫາວິທະຍາໄລ ເພື່ອຮັບ*ການຊ່ວຍເຫຼືອ*ແບບເປັນຄວາມເລັບ.
- ໂຄງການການຊ່ວຍເຫຼືອຄະນະອາຈານ ແລະ ພະນັກງານ (FSAP) ມີການໃຫ້ຄຳປຶກສາ ແລະ ໂຄງການສຳລັບຄະນະອາຈານມະຫາວິທະຍາໄລ ແລະ ພະນັກງານ (ເຂົ້າເບິ່ງໃນເວັບໄຊ້ຂອງພວກເຂົາເຈົ້າ ສຳລັບຂໍ້ມູນເພີ່ມເຕີມຫຼືໂທ 303-492-3020).
- ສຳນັກງານຊ່ວຍເຫຼືອຜູ້ເຄາະຮ້າຍ (OVA) ເປັນສະຖານທີ່ທີ່ມີແຫຼ່ງຂໍ້ມູນເປັນຄວາມລັບມີໃຫ້ສະມາຊິກ ພາຍໃນຊຸມຊົນຂອງ CU Boulder ຜູ້ທີ່ມີປະສົບການທີ່ຊຸ່ນເຄືອງຫຼືກະທົບກະເທືອນຈິດໃຈ ກ່ຽວຂ້ອງກັບ ການປະພຶດຜິດທາງເພດ, ການຈຳແນກກີດກັນຫຼືການຄຸກຄາມ (ເຂົ້າເບິ່ງເວັບໄຊ້ ສຳລັບຂໍ້ມູນເພີ່ມເຕີມຫຼືໂທຫາເບີ 303-492-8855).
- ສຳນັກງານ Ombuds ໃຫ້ການຊ່ວຍເຫຼືອສະມາຊິກທຸກຄົນຂອງວິທະຍາເຂດ CU Boulder ເພື່ອແກ້ໄຂແບບບໍ່ເປັນທາງການ ບັນດາຂໍ້ຮຽກຮ້ອງ ແລະ ຂໍ້ຂັດແຍ່ງກັບ ບຸກຄົນ, ສຳໜັກງານ, ຫຼືພະແນກ ພາຍໃນມະຫາວິທະຍາໄລ. ພວກເຂົາປະຕິບັດໜ້າທີ່ແບບເປັນຄວາມລັບແລະອິດສະຫຼະ ຈາກພະແນກຫຼືສຳນັກງານ (ເຂົ້າເບິ່ງເວັບໄຊ້ ສຳລັບຂໍ້ມູນເພີ່ມເຕີມຫຼືໂທຫາເບີ 303-492-5077).